ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ

ເລກທີ: 2596 /ຄກຖ

ນະຄອນຫຼວງວຽງຈັນ, ວັນທີ 07 ເມສາ 2026

# ແຈ້ງການ

**ເຖິງ:** ພະນັກງານ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນທີ່ນັບຖື.

**ເລື່ອງ:** ບໍລິການຈັດສົ່ງບັດປະຈຳຕົວດີຈີຕ່ອນ ຂອງທ່ານເຖິງເຮືອນ

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນ ໄຫວຂອງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ສະບັບເລກທີ 945/ປກສ, ລົງວັນທີ 03 ພຶດສະພາ 2023;
- ອີງຕາມ ການຕົກລົງເຫັນດີຮ່ວມມືກັບ ບໍລິສັດ ສະຕາຣ ໂທລະຄົມ ຈຳກັດ (Unitel) ໃຫ້ເປັນຜູ້ຈັດສົ່ງບັດປະຈຳຕົວຂອງປະຊາຊົນ ຢູ່ໃນຂອບເຂດນະຄອນຫຼວງວຽງຈັນ.

ກົມຄຸ້ມຄອງສຳມະໂນຄົວ ແລະ ສ້າງຮາກຖານ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ໄດ້ຊາບວ່າ ເພື່ອເປັນການຍົກລະດັບວຽກງານການບໍລິການ ກໍ່ຄືການອຳນວຍຄວາມສະດວກ, ປະຫຍັດເວລາໃນການເດີນທາງ ໃຫ້ພໍ່ແມ່ປະຊາຊົນໃນການຮັບບັດປະຈຳຕົວດີຈີຕ່ອນຂອງທ່ານ ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສາງຮາກຖານ ຈຶ່ງໄດ້ຮ່ວມມືກັບ ບໍລິສັດ ສະຕາຣ ໂທລະຄົມ (UNITEL) ໃນການໃຫ້ບໍລິການຈັດສົ່ງບັດປະຈຳຕົວເຖິງເຮືອນ ຫຼື ເຖິງສະຖານທີ່ ທີ່ເຈົ້າຂອງບັດເປັນຜູ້ກຳນົດ ໃນຂອບເຂດນະຄອນຫຼວງວຽງຈັນ ລະອຽດດັ່ງນີ້:

1. ປະຊາຊົນຜູ້ທີ່ມາເຮັດບັດປະຈຳຕົວ ຢູ່ທີ່ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານສາມາດ ເລືອກໄດ້ຕອນ ຂື້ແບບຟອມບັດປະຈຳຕົວວ່າ ຈະມາຮັບເອົາບັດຂອງທ່ານເອງຢູ່ກົມ ຫຼື ຈະໃຊ້ບໍລິການໃຫ້ຈັດສົ່ງເຖິງເຮືອນ (ພາຍໃນ ນະຄອນ ຫຼວງວຽງຈັນ);
2. ສຳລັບຜູ້ທີ່ເລືອກໃຊ້ບໍລິການຈັດສົ່ງຮອດເຮືອນ ໃຫ້ຂາຍຕາມແບບຟອມໄດ້ກຳນົດໄວ້;
3. ການຈັດສົ່ງບັດ ແມ່ນຕ້ອງສົ່ງເຖິງເຮືອນ ຫຼື ເຖິງມືຂອງທ່ານ ຜູ້ເປັນເຈົ້າຂອງບັດ, ທຸກຂໍ້ມູນບັດຂອງທ່ານແມ່ນໄດ້ຮັບການປົກປ້ອງຕາມລະບຽບ ແລະ ກົດໝາຍ;
4. ກໍລະນີໃຫ້ບຸກຄົນອື່ນ ຮັບບັດແທນ ຕ້ອງໄດ້ຮັບການຢືນຢັນຈາກເຈົ້າຂອງບັດກ່ອນທຸກຄັ້ງກ່ອນມອບບັດ ແລະ ຕ້ອງຖ່າຍພາບໄວ້ເປັນຫຼັກຖານ;

5. ໝາຍເລກໂທລະສັບ ທີ່ຈະປະສານຫາທ່ານກ່ອນການຈັດສົ່ງ ແມ່ນ "030 9668868" ເປີດງວນີ້ເທົ່ານັ້ນ;

6. ຊ່ອງທາງຕິດຕໍ່ສອບຖາມ ຂໍ້ມູນເພີ່ມເຕີມ ສາມາດຕິດຕໍ່ໄດ້ທີ່:

**- ສາຍດ່ວນຂອງກົມ 509 ໂທ: 1529 ຕາມໂມງລັດຖະການ**

**- ສູນບໍລິການລູກຄ້າ ບໍລິສັດ ສະຕາໂທລະຄົມ (UNITEL) ໂທ: 030 9668668**

ສໍາລັບຜູ້ທີ່ເຮັດບັດປະຈໍາຕົວໄປແລ້ວ ແລະ ຍັງລໍຖ້າບັດ, ພາຍຫຼັງທີ່ບັດຂອງທ່ານພິມສໍາເລັດແລ້ວຈະມີ **SMS 509 ID-CARD** ສົ່ງແຈ້ງໃຫ້ທ່ານຊາບ, ສໍາລັບທ່ານຜູ້ທີ່ສະດວກກໍ່ສາມາດເຂົ້າມາຮັບເອົາບັດຂອງທ່ານໄດ້ທີ່ກົມຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ, ສໍານັກງານຕັ້ງຢູ່ ບ້ານ ແສງສະຫວ່າງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ຫຼື ແຈ້ງເບີ **030 9668668** ເພື່ອນໍາໃຊ້ບໍລິການຈັດສົ່ງເຖິງເຮືອນກໍ່ໄດ້.

**ໝາຍເຫດ:** ກ່ອນການຈັດສົ່ງ ເບີໂທລະສັບໝາຍເລກ **030 9668668** ຈະໂທສອບຖາມເພື່ອຢັ້ງຢືນສະຖານທີ່ຈັດສົ່ງບັດຂອງທ່ານ, ຈະບໍ່ສອບຖາມຂໍ້ມູນສ່ວນຕົວຂອງທ່ານຢ່າງເດັດຂາດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານທຸກພາກສ່ວນເພື່ອຊາບ

**ຫົວໜ້າກົມ**

ພົຈວ. ແກ່ນຈັນ ພົມມະຈັກ